## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 115 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 04.07.2008

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມໃຫຍ່ການເມືອງກອງທັບປະຊາຊົນລາວ.

- ອີງຕາມ ກົດໝາຍ ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງປ້ອງກັນປະເທດ ສະບັບເລກທີ 348/ນຍ ລົງວັນທີ 01 ຕຸລາ 2007.
- ອີງຕາມ ການສະເໜີຂອງທ່ານລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ສະບັບເລກທີ 645/ກປທ, ລົງວັນທີ 27 ມີນາ 2008.
- ອີງຕາມ ການສະເໜີ ຂອງທະບວງການປົກຄອງ ແລະຄຸ້ມຄອງລັດຖະກອນ ສະບັບເລກທີ 84/ທປຄ, ລົງວັນທີ 03 ກໍລະກົດ 2008.

### ນາຍົກລັດຖະມົນຕີແຫ່ງ ສປປ ລາວ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ການພົວພັນປະສານງານ ແລະ ແບບແຜນວິທີເຮັດວຽກ ຂອງກົມໃຫຍ່ການເມືອງກອງທັບປະຊາຊົນລາວ. ເພື່ອຍົກສູງຄວາມຮັບຜິດຊອບ ການເຄື່ອນໄຫວວຽກງານພັກວຽກງານການເມືອງໃນກອງທັບ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກົມໃຫຍ່ການເມືອງກອງທັບ *(ຂຽນຫຍໍ້ວ່າ: ກມທ)* ແມ່ນໜຶ່ງໃນບັນດາກົມໃຫຍ່ທີ່ຂຶ້ນກັບກະຊວງປ້ອງກັນປະເທດ, ມີພາລະບົດບາດເປັນເສນາທິການ ແລະ ຢູ່ໃຕ້ການຊີ້ນຳ ໂດຍກົງຂອງຄະນະພັກ ກະຊວງປ້ອງກັນປະເທດ ແລະ ຄະນະເລຂາທິການສູນກາງພັກ ໃນການຄົ້ນຄວ້າ, ວາງແຜນ, ນຳສະເໜີ ແລະ ຈັດຕັ້ງປະຕິບັດວຽກງານພັກ ວຽກງານການເມືອງ ໃນທົ່ວກອງທັບ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

3.1 ກຳແໜ້ນສະພາບການເມືອງແນວຄິດ ແລະ ການຈັດຕັ້ງຂອງກອງທັບ ເພື່ອລາຍງານຄະນະນຳກະຊວງປ້ອງກັນປະເທດ, ຄະນະຈັດຕັ້ງສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ. ສຶກສາອົບຮົມລັດທິມາກເລນິນ, ແນວທາງແຜນນະໂຍບາຍມະຕິຄຳສັ່ງຂອງພັກ, ນິຕິກຳຕ່າງໆ ຂອງກອງທັບ ແລະ ມະຕິຂອງຄະນະພັກກະຊວງປ້ອງກັນປະເທດ; ສຶກສາອົບຮົມ ແລະ ເສີມຂະຫຍາຍທາດແທ້ມູນເຊື້ອຂອງຊາດ, ຂອງກອງທັບປະຊາຊົນລາວ, ເຮັດໃຫ້ກອງທັບຍຶດໝັ້ນອຸດົມການສັງຄົມນິຍົມມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ເຮັດສຳເລັດ ທຸກໜ້າທີ່.

3.2 ຄົ້ນຄວ້າ, ວາງແຜນການ, ໂຄງການທີ່ເປັນລັກສະນະຍຸດທະສາດຍາວນານ ໃນວຽກງານພັກ ວຽກງານການເມືອງ.

3.3 ກຳນົດແຜນຍຸດທະສາດປັບປຸງການຈັດຕັ້ງ, ການກໍ່ສ້າງພັກພະນັກງານໃນກອງທັບແຕ່ລະໄລຍະຕາມແນວທາງຂອງພັກ.

3.4 ຄົ້ນຄວ້ານຳສະເໜີ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍຂອງພັກລັດຕໍ່ນາຍ ແລະ ພົນທະຫານໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ສຶກສາອົບຮົມໃຫ້ນິຕິບຸກຄົນ ແລະ ບຸກຄົນເຊື່ອມຊຶມ, ຕັ້ງໜ້າປະກອບສ່ວນເຮັດວຽກງານນະໂຍບາຍໃຫ້ດີ.

3.5 ຊີ້ນຳນຳພາປັບປຸງກໍ່ສ້າງອົງການຈັດຕັ້ງມະຫາຊົນ ຂອງພັກໃນກອງທັບ ໃຫ້ເຂັ້ມແຂງເປັນກຳລັງແຮງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງກອງທັບ, ສຶກສາອົບຮົມມະຫາຊົນໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນເຈົ້າການສ້າງຂະບວນການຕ່າງໆໃນກອງທັບໃຫ້ຟົດຟື້ນ ແລະ ຕໍ່ເນື່ອງ.

3.6 ຄົ້ນຄວ້າເຊື່ອມຊຶມແນວທາງ ແຜນນະໂຍບາຍ ຂອງພັກ, ແນວທາງປ້ອງກັນຊາດ ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ; ຈັດຕັ້ງທັນລົງກໍ່ສ້າງຮາກຖານການເມືອງ, ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ຮັບປະກັນໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມເປັນລະບຽບ ຮຽບຮ້ອຍ.

3.7 ຄົ້ນຄວ້າຈັດຕັ້ງປະຕິບັດວຽກງານກວດກາ-ກວດການ, ດ້ານການນຳພາບັນຊາ ແລະຄຸ້ມຄອງທັບ; ສະເໜີ ແລະແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ຂໍຄວາມເປັນທຳຂອງນາຍ ແລະພົນທະຫານ; ຕ້ານ ແລະ ສະກັດກັ້ນການລະເມີດຂໍ້ກຳນົດ, ກົດລະບຽບ, ກົດໝາຍຂອງລັດ ແລະ ປະກົດການຫຍໍ້ທໍ້ຕ່າງໆໃນກອງທັບ.

3.8 ຄົ້ນຄ້ວາ, ກຳນົດ ແລະຈັດຕັ້ງປະຕິບັດວຽກງານປ້ອງກັນພາຍໃນກອງທັບ ໃຫ້ມີຄວາມປອດໃສທາງດ້ານການເມືອງ ໜັກແໜ້ນທາງດ້ານການຈັດຕັ້ງ, ສຶກສາອົບຮົມ ສະຕິລະວັງຕົວປະຕິວັດ; ປະຕິບັດສິດຂອງອົງການສືບສວນ ສອບສວນໃນກອງທັບຕາມກົດໝາຍແຫ່ງ ສປປ ລາວ.

3.9 ຄົ້ນຄ້ວາຈັດຕັ້ງປະຕິບັດ, ຕິດຕາມ, ກວດກາການປະຕິບັດກົດໝາຍໃນກອງທັບໃຫ້ຖືກຕ້ອງ; ດຳເນີນການສຶກສາອົບຮົມນາຍ ແລະພົນທະຫານເຊື່ອມຊຶມ, ມີສະຕິ ເຄົາລົບລະບຽບວິໄນ ຂອງກອງທັບກົດໝາຍຂອງລັດ ແລະ ສັ່ງຟ້ອງຜູ້ກະທຳຜິດຂຶ້ນສານ.

3.10 ຄົ້ນຄວ້າຈັດຕັ້ງປະຕິບັດວຽກງານສານໃນກອງທັບ, ດຳເນີນການພິພາກສາຄະດີ ແລະລົງໂທດຜູ້ກະທຳຜິດຕໍ່ກົດໝາຍອາຍາ ທີ່ພົວພັນເຖິງວຽກງານປ້ອງກັນຊາດ; ຕ້ານ ແລະສະກັດກັ້ນການລະເມີດລະບຽບວິໄນ ຂອງກອງທັບ ກົດໝາຍຂອງລັດ. ແນໃສ່ປົກປັກຮັກສາລະບອບການເມືອງ, ເສດຖະກິດສັງຄົມຂອງຊາດ, ສິດ ແລະກຽດສັກສີຂອງນາຍ ແລະພົນທະຫານ.

**ມາດຕາ 4. ຂອບເຂດສິດ**

4.1 ຄົ້ນຄວ້າຕົກລົງ ແລະນຳສະເໜີບັນຫາຕ່າງໆ ກ່ຽວກັບວຽກງານພັກ ວຽກງານການເມືອງໃນກອງທັບ.

4.2 ຄົ້ນຄວ້າຕົກລົງ ແລະນຳສະເໜີຄະນະພັກຂັ້ນເທິງ ກ່ຽວກັບການປັບປຸງກໍ່ສ້າງການຈັດຕັ້ງພັກ, ຂະຫຍາຍພັກ ແລະປະຕິບັດວິໄນຕໍ່ສະມາຊິກພັກ ນາຍທະຫານທີ່ກະທຳຜິດຕໍ່ ກົດລະບຽບຂອງພັກ.

4.3 ຄົ້ນຄວ້ານຳສະເໜີ ແລະຕົກລົງແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ, ຍົກຂັ້ນເງິນເດືອນ, ອຸດໜູນ, ບຳນານ, ປົດຕຳແໜ່ງ, ປົດຊັ້ນ, ໂຈະການຍ້ອງຍໍຜົນງານ ແລະປະຕິບັດ ນະໂຍບາຍຕ່າງໆຕໍ່ນາຍ ແລະພົນທະຫານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ແລະ ບັນດາຂໍ້ກຳນົດຂອງກະຊວງປ້ອງກັນປະເທດ.

4.4 ຄົ້ນຄວ້ານຳສະເໜີ ບັນດາບັນຫາກ່ຽວກັບ ການຈັດຕັ້ງປະຕິບັດລະບຽບກົດໝາຍໃນກອງທັບ.

4.5 ປະຕິບັດສິດອື່ນໆ ທີ່ມີການພົວພັນເຖິງວຽກງານພັກ ວຽກງານການເມືອງຕາມການຕົກລົງ ຂອງຄະນະເລຂາທິການສູນກາງພັກແລະລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

ມາດຕາ 5. ໂຄງປະກອບກົງຈັກ

ກ. ບັນດາກົມນ້ອຍ ແລະ ອົງການທຽບເທົ່າ

1. ກົມໂຄສະນາອົບຮົມ
2. ກົມຈັດຕັ້ງພັກ
3. ກົມພະນັກງານ
4. ກົມນະໂຍບາຍ
5. ກົມກໍ່ສ້າງຮາກຖານ
6. ກົມປ້ອງກັນພາຍໃນກອງທັບ
7. ກົມກວດກາກອງທັບ
8. ອົງການໄອຍະການທະຫານຂັ້ນສູງ
9. ສານທະຫານຂັ້ນສູງ

ຂ. ບັນດາຫ້ອງການທີ່ມີຖານະທຽບເທົ່າກົມນ້ອຍ ຫຼື ທຽບເທົ່າກອງພົນ

1. ຫ້ອງການກົມໃຫຍ່ການເມືອງກອງທັບ
2. ຫ້ອງການປະກັນສັງຄົມ
3. ຫ້ອງການຊາວໜຸ່ມກອງທັບ
4. ຫ້ອງການສະຫະພັນແມ່ຍິງກອງທັບ
5. ຫ້ອງການກຳມະບານກອງທັບ
6. ຫ້ອງການເມືອງ
7. ຫ້ອງການບໍລິຫານ

ຄ. ບັນດາກອງຮາກຖານທີ່ມີຖານະທຽບເທົ່າກອງພັນໃຫຍ່

1. ໜັງສືພິມກອງທັບ
2. ວິທະຍຸໂທລະພາບກອງທັບ
3. ສິລະປະກອນກອງທັບ
4. ຫໍພິພິທະພັນປະຫວັດສາດກອງທັບ
5. ໂຮງພິມກອງທັບ
6. ຫໍສະໝຸດກອງທັບ
7. ວາລະສານປ້ອງກັນຊາດ

**ມາດຕາ 6. ໂຄງປະກອບບຸກຄະລະກອນ**

6.1 ຄະນະກົມໃຫຍ່ການເມືອງກອງທັບປະກອບດ້ວຍ: ຫົວໜ້າ ແລະຮອງຈຳນວນໜຶ່ງ ໂດຍແມ່ນນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

6.2 ບັນດາກົມ, ຫ້ອງການ ແລະ ບັນດາກອງຮາກຖານຂຶ້ນກັບ ກົມໃຫຍ່ການເມືອງກອງທັບປະກອບດ້ວຍ: ຫົວໜ້າ ແລະບັນດາຮອງຈຳນວນໜຶ່ງ ໂດຍໄດ້ຮັບການແຕ່ງຕັ້ງຍົກຍ້າຍ ແລະປົດຕຳແໜ່ງ ຈາກລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ຕາມການສະເໜີ ຂອງຫົວໜ້າກົມໃຫຍ່ການເມືອງກອງທັບ.

6.3 ນອກຈາກນີ້ຍັງມີບັນດາພະແນກການ, ຂະແໜງການ, ນາຍ ແລະພົນທະຫານ ແລະພາລະກອນປ້ອງກັນຊາດ ທີ່ສັງກັດຢູ່ໃນໂຄງປະກອບກົງຈັກການຈັດຕັ້ງ ກົມໃຫຍ່ການເມືອງກອງທັບ.

## ໝວດທີ IV
## ການພົວພັນປະສານງານ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7. ການພົວພັນປະສານງານ**

7.1 ພົວພັນປະສານສົມທົບວຽກງານກັບບັນດາກົມໃຫຍ່ ແລະຫ້ອງວ່າການກະຊວງປ້ອງກັນປະເທດ.

7.2 ພົວພັນກັບອົງການຈັດຕັ້ງພັກ-ລັດ ຂັ້ນສູນກາງຄື: ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ ແລະຄະນະໂຄສະນາອົບຮົມສູນກາງພັກຢ່າງເປັນປົກກະຕິ.

7.3 ພົວພັນກັບອົງການການຈັດຕັ້ງມະຫາຊົນຂັ້ນສູນກາງຄື: ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສູນກາງສະຫະພັນແມ່ຍິງລາວ ແລະສູນກາງສະຫະພັນກຳມະບານລາວກ່ຽວກັບວຽກງານຂອງອົງການຈັດຕັ້ງມະຫາຊົນ.

7.4 ພົວພັນກັບອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານພັກ ວຽກງານການເມືອງ ຂອງກຳລັງທະຫານທ້ອງຖິ່ນ.

7.5 ພົວພັນຮ່ວມມືກັບຕ່າງປະເທດ ໃນຂົງເຂດວຽກງານພັກ ວຽກງານການເມືອງ ຕາມການຕົກລົງ ຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ.

**ມາດຕາ 8. ແບບແຜນວິທີເຮັດວຽກ**

8.1 ກົມໃຫຍ່ການເມືອງກອງທັບ ເຄື່ອນໄຫວຕາມຫລັກການລວມສູນປະຊາທິປະໄຕເຮັດວຽກເປັນໝູ່ຄະນະ ບຸກຄົນຮັບຜິດຊອບພາຍໃຕ້ການຊີ້ນຳໂດຍກົງ ຂອງຄະນະເລຂາທິການສູນກາງພັກ ແລະຄະນະພັກກະຊວງປ້ອງກັນປະເທດ ປະຕິບັດລະບອບສ່ອງແສງລາຍງານວຽກງານພັກ ວຽກງານການເມືອງ ແລະ ເຜີຍແຜ່ສະພາບການເປັນປົກກະຕິ.

8.2 ກົມໃຫຍ່ການເມືອງກອງທັບ ຖືເອົາຄວາມສາມັກຄີອັນໜຶ່ງອັນດຽວ ເປັນຫລັກການພື້ນຖານ ເພື່ອຮັບປະກັນຄວາມເປັນເອກະພາບທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການກະທຳ.

8.3 ກົມໃຫຍ່ການເມືອງກອງທັບ ເຄື່ອນໄຫວວຽກງານໂດຍມີແຜນການ, ມີການປະສານສົມທົບ, ມີການຕິດຕາມ ກວດກາ ແລະ ສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ກາປະທັບ**

ກົມໃຫຍ່ການເມືອງກອງທັບ ມີໜ້າທີ່ສ້າງແຜນການ, ຄຸ້ມຄອງ ແລະນຳໃຊ້ງົບປະມານ ເຂົ້າໃສ່ວຽກງານພັກ ວຽກງານການເມືອງ ຕາມການຕົກລົງ ຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ແຫ່ງ ສປປ ລາວ.

ກົມໃຫຍ່ການເມືອງກອງທັບປະຊາຊົນລາວມີກາປະທັບຂອງຕົນເອງເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ**

ມອບໃຫ້ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນຜູ້ກຳນົດພາລະບົດບາດ ສິດໜ້າທີ່ ແລະການເຄື່ອນໄຫວ ຂອງບັນດາກົມ, ຫ້ອງການ ແລະກອງຮາກຖານຂຶ້ນກັບກົມໃຫຍ່ການເມືອງກອງກອງທັບ.

ມອບໃຫ້ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ກຳນົດພາລະບົດບາດ ສິດໜ້າທີ່ ແລະ ການເຄື່ອນໄຫວຂອງພະແນກການຕ່າງໆ ທີ່ວກົມໃຫຍ່ການເມືອງກອງທັບ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດານິຕິກຳ ຫລື ລະບຽບການໃດທີ່ມີເນື້ອໃນຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ